# ບົດທີ 4

# ພວກຟາລີຊາຍ ແລະ ພວກຊາດູກາຍ




ໃຫ້ທ່ານເບິ່ງສອງພວກນີ້ເຂົາຖືສາດສະໜາຢິວທັງສອງ ແຕ່ຖືໄປຄົນລະຢ່າງ ພວກໜຶ່ງຖືເຄັ່ງຄັດ ຫຼາຍ ອີກພວກໜຶ່ງ ເກືອບບໍ່ຖືເລີຍ. ໃນບົດນີ້ເຮົາຈະຮຽນເລື່ອງເຂົາທັງສອງ.

**1** ຕອນນີ້ເຮົາຍັງຮຽນເລື່ອງເຫດການທຳອິດໃນສະໄໝປີທີ່ພະເຢຊູຕຽມຕົວ ເຫດການນີ້ຄືຫຍັງ?

______________________________________________________________

______________________________________________________________

ເຫດການນີ້ເຮົາພົບໃນ ມັດທາຍ ບົດແລະຂໍ້ໃດແດ່? ____________________________

ຕອບ:

***1*** *ໂຢຮັນບັບຕິສະໂຕເທດສະໜາ ມທ 3:1-12*

**2** ໃຫ້ອ່ານ ມທ 3:6 ໂຢຮັນບັບຕິສະໂຕໄດ້ເທດສະໜາເລື່ອງອານາຈັກສະຫວັນ ແຕ່ວ່າຍິ່ງໄປກວ່ານັ້ນເພິ່ນໃຫ້ຄົນຮັບ ສິ່ງຫຍັງ? ________________________________________
ໃນແມ່ນ້ຳໃດ? ________________________________________________________

**3** ມີຫຼາຍຄົນທີ່ມາຮັບສິນບັບຕິສະມາຈາກໂຢຮັນບັບຕິສະໂຕ ແຕ່ມີຢູ່ສອງພວກໃນສາດສະໜາຢິວເປັນຕົ້ນ. ແມ່ນສອງພວກໃດ? (ມທ 3:7) ______________ ແລະ _____________

**4** ຟາລີຊາຍແລະຊາດູກາຍ ແຍກເປັນພັກເປັນພວກໃນດ້ານໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)
ກ. ດ້ານການເມືອງ
ຂ. ດ້ານສາດສະໜາ
ຄ. ດ້ານວັດທະນະທຳ

**5** ພວກຟາລີຊາຍມັກຖືພະບັນຍັດທີ່ໃຫ້ກັບໂມເຊນັ້ນຢ່າງເຄັ່ງຄັດຫຼາຍ ແຕ່ວ່າຕໍ່ໄປເຂົາຖືບໍ່ແມ່ນແຕ່ສິບປະການ ເຂົາ ເພີ້ມຂຶ້ນຈົນວ່ານັບບໍ່ໄດ້. ນອກເໜືອຈາກພະບັນຍັດສິບປະການແລ້ວເຂົາໃຊ້ຄຳສອນທີ່ຕົກທອດສືບຕໍ່ກັນມາອີກ. ເຂົາກ່າວຫາວ່າ ພະເຢຊູຜິດຕໍ່ຄຳສອນທີ່ຕົກທອດປະການໃດ? (ມທ 15:1-2) ____________________________________________

**6** ແມ່ນພວກຟາລີຊາຍ ຫລືພວກຊາດູກາຍທີ່ເພີ້ມຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານ?

_________________________________________________________________

**7** ພວກຟາລີຊາຍເອົາຫຍັງມາເພີ້ມຕື່ມໃສ່ພະບັນຍັດ? ____________________________

**8** ຄຳສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານປະການໜຶ່ງທີ່ເຮົາເຫັນແລ້ວຄືການລ້າງມືກ່ອນຈະກິນເຂົ້າ. ເຂົາລ້າງມືບໍ່ ແມ່ນເພື່ອໃຫ້ຖືກຫຼັກອະນາໄມ ແຕ່ເຂົາລ້າງມືເປັນພິທີທາງສາດສະໜາອັນບໍ່ມີເຫດຜົນອື່ນ. ເຂົາເຮັດພິທີນີ້ໃນເວລາ ໃດ? (ມທ 15:2) ___________________

ຕອບ:

***2*** *ຮັບບັບຕິສະມາ ແມ່ນ້ຳຢໍດາເນ*

***3*** *ຟາລີຊາຍ ແລະ ຊາດູກາຍ*

***4*** *ຂ. ຖືກ*

***5*** *ບໍ່ລ້າງມືກ່ອນຮັບປະທານອາຫານ*

***6*** *ພວກຟາລີຊາຍ*

***7*** *ຄຳສອນທີ່ຕົກທອດມາຈາກເຖາເກົ່າບູຮານ*

***8*** *ກ່ອນຈະກິນອາຫານ*

**9** ຜູ້ໃດຈະຮັກສາອະນາໄມໃຫ້ດີຄວນຈະລ້າງມືກ່ອນຈະກິນອາຫານເພື່ອປ້ອງກັນພະຍາດແຕ່ພວກຟາລີຊາຍບໍ່ໄດ້ຫ່ວງ ກັບຫຼັກອະນາໄມ ເຂົາລ້າງມືເປັນພິທີທາງສາດສະໜາເຂົາຈະລ້າງມືປານໃດກໍຕາມ ແຕ່ບໍ່ສາມາດຊໍາຣະຕົວຂ້າງໃນໄດ້. ຂໍໃຫ້ອ່ານ ມທ 15:19-20 ແລ້ວພິຈາລະນາໃຫ້ເຂົ້າໃຈຄໍາເວົ້າຂອງພະເຢຊູໃນຕອນນີ້.

ກ. ຖ້າເຮົາຈະໃຫ້ຂ້າງໃນສະອາດ ເຮົາຄວນຈະອາບນໍ້າ ຫລືຊໍາຣະໃຈ? ______________

ຂ. ການທີ່ຈະປ່ຽນທ່າທີໃນໃຈຕໍ່ບາບແມ່ນຫຍັງ? ______________________________

**10** ຖ້າເຮົາຈະເຂົ້າໃນອານາຈັກສະຫວັນ ແມ່ນປະການໃດທີ່ຈໍາເປັນ ຄໍາສອນທີ່ຕົກທອດ ຫລືການຖິ້ມໃຈເກົ່າເອົາໃຈໃໝ່? ______________________________________________

**11** ແມ່ນຄໍາສອນທີ່ຕົກທອດມາຈາກເຖົ້າເກົ່າບູຮານທີ່ພວກຟາລີຊາຍຂໍຮ້ອງໃຫ້ສາວົກຂອງພະເຢຊູເຮັດຢ່າງໃດ? ______________________________________________________

**12** ພວກຟາລີຊາຍຖືພະບັນຍັດທີ່ໃຫ້ກັບໂມເຊຢ່າງເຄັ່ງຄັດຫຼາຍ ແຕ່ຫຼາຍສັດຕະວັດຕໍ່ຫຼາຍສັດຕະວັດເຂົາເຄີຍເພີ້ມຄໍາ ສອນທີ່ສືບທອດແຕ່ບູຮານມີຫຼາຍຂໍ້ອີກດ້ວຍ. ແຕ່ກົງກັນຂ້າມພວກຊາດູກາຍເຂົາປະຕິເສດຄໍາສອນທີ່ສືບທອດແຕ່ບູຮານ ແຕ່ຍິ່ງໄປກວ່ານັ້ນເຂົາປະຕິເສດອີກວ່າ ບໍ່ມີທູດສະຫວັນແລະບໍ່ມີການຄືນມາຈາກຕາຍ. (ຄືຕາຍແລ້ວກໍຕາຍໄປ)

ກ. ແມ່ນພວກໃດທີ່ຖືພະທໍາຂອງພະເຈົ້າຫຼາຍກວ່າກັນ? ___________________________

ຂ. ແມ່ນພວກໃດທີ່ຖືພະທໍາຂອງພະເຈົ້າໜ້ອຍກວ່າ? ____________________________

**13** ກ. ພວກຟາລີຊາຍເພີ້ມຫຍັງໃສ່ພະຄໍາຂອງພະເຈົ້າ? ____________________________

ຂ. ພວກຊາດູກາຍເຄີຍຕັດຄວາມອອກຈາກພະທໍາຂອງພະເຈົ້າ ແມ່ນຫຼັກສໍາຄັນປະການໃດທີ່ເຂົາບໍ່ຮັບເຊື່ອ? ____________________________________________________

**14** ໃຫ້ອ່ານ ກິດຈະການ 23:6-10 ໃຫ້ສັງເກດໃນເວລາທີ່ອາຈານໂປໂລຢູ່ຕໍ່ໜ້າສານສູງສຸດ.

ກ. ມີສອງຈໍາພວກໃດໃນປະຊຸມນັ້ນ? __________________ ແລະ ________________

ຂ. ກ່ອນທີ່ອາຈານໂປໂລບໍ່ໄດ້ຮັບເຊື່ອໃນພະເຢຊູ ເພິ່ນຂຶ້ນກັບພວກໃດ? ______________

ຕອບ:

**9** *ກ. ຊໍາຣະໃຈ ຂ. ການຖິ້ມໃຈເກົ່າເອົາໃຈໃໝ່*

**10** *ການຖິ້ມໃຈເກົ່າເອົາໃຈໃໝ່*

**11** *ລ້າງມື*

**12** *ກ. ພວກຟາລີຊາຍ ຂ. ຊາດູກາຍ*

**13** *ກ. ຄໍາສອນທີ່ສືບທອດແຕ່ບູຮານ ຂ. ການຄືນພະຊົນ*

**14** *ກ. ຟາລີຊາຍ ແລະ ຊາດູກາຍ ຂ. ຟາລີຊາຍ*

**15** ກ. ໃນ ກຈທ 23:8 ແມ່ນພວກໃດທີ່ເຊື່ອໃນການຄືນພະຊົນ? ____________________

ຂ. ພວກໃດບໍ່ເຊື່ອໃນການຄືນພະຊົນ? ____________________________________

**16** ຜົນສຸດທ້າຍສານສູງສຸດນັ້ນເກີດມີການຖົກຖຽງກັນຂຶ້ນ ເຂົາຖຽງກັນເລື່ອງຫຍັງ? (ກຈທ 23:6)

______________________________________________________________

**17** ໃນຮູບຕໍ່ໄປນີ້ສະແດງການຜິດຖຽງກັນ!

ຮູບ "ກ" ສະແດງເຖິງພວກໃດ? __________ ຮູບ "ຂ" ສະແດງເຖິງພວກໃດ? _______




**18** ກ. ພວກໃດຖືຄຳສອນບູຮານ? ________________________________________

ຂ. ພວກໃດບໍ່ຖື? _______________________________________________

**19** ພວກຟາລິຊາຍແລະຊາດູກາຍຢູ່ຄົນລະຝ່າຍເພາະຄວາມເຊື່ອຖືກໍ່ແມ່ນຢູ່ ແຕ່ເຂົາຢູ່ຄົນລະຝ່າຍດ້ານສັງຄົມອີກດ້ວຍ. ພວກຟາລິຊາຍມີຈຳນວນຫຼວງຫຼາຍທີ່ເປັນຜູ້ນຳດ້ານສາດສະໜາຝ່າຍຊົນຊັ້ນຊາວໄຮ່ນາເປັນຕົ້ນ. ພວກຊາດູກາຍຢູ່ຝ່າຍພວກສັກດີນານາຍທຶນ ເຂົາປະຕິເສດສິ່ງທີ່ນອກເໜືອຈາກທຳມະຊາດຄື ເຂົາບໍ່ເຊື່ອໃນສິ່ງບໍ່ເຫັນກັບຕາ.

ກ. ພວກໃດມັກເຂົ້າຮ່ວມກັບຄົນທຳມະດາ? ______________________________

ຂ. ພວກໃດມັກເຂົ້າຮ່ວມກັບຜູ້ມີຕຳແໜ່ງ? ______________________________

ຕອບ:

***15*** *ກ. ຟາລິຊາຍ* *ຂ. ຊາດູກາຍ*

***16*** *ເລື່ອງການຄືນພະຊົນ*

***17*** *ກ. ຟາລິຊາຍ* *ຂ. ຊາດູກາຍ*

***18*** *ກ. ຟາລິຊາຍ* *ຂ. ຊາດູກາຍ*

***19*** *ກ. ຟາລິຊາຍ* *ຂ. ຊາດູກາຍ*

**20** ໃນສອງຈຳພວກນັ້ນ ແມ່ນພວກໃດທີ່ກະສັດເຮໂລດອາດຍິນດີຕ້ອນຮັບເຂົ້າພະລາຊະວັງ?

______________________________________________

**21** ພວກກະສັດເຮໂລດມີສິດປົກຄອງໃຕ້ອຳນາດຂອງຈັກກະພັດໃດ? ________________

**22** ໃນສອງພວກນີ້ມີພວກໜຶ່ງທີ່ຊັງຄົນໂລມ ອີກພວກໜຶ່ງມັກພົວພັນກັບຄົນໂລມ ເພາະເຂົາຮ່ວມມືກັບກະສັດເຮໂລດ. ໃນຮູບຕໍ່ໄປນີ້ ຕົວອັກສອນໃດສະແດງເຖິງພວກຟາລີຊາຍ? ຕົວອັກສອນໃດສະແດງເຖິງພວກຊາດູກາຍ?

ກ. ____________________________ ຂ. ____________________________


ກ.


ຂ.

**23** ເຖິງແມ່ນວ່າໃນສານສູງສຸດນັ້ນປະກອບດ້ວຍທັງສອງຝ່າຍກໍຕາມ ມີແຕ່ຝ່າຍດຽວທີ່ມີສິດປົກຄອງຢູ່ສະເໝີ ຝ່າຍນັ້ນ ຄືຝ່າຍຂອງກະສັດເຮໂລດແລະເຈົ້ານາຍໂລມເປັນຜູ້ອຸດໜູນ. ແມ່ນຝ່າຍໃດທີ່ມີອຳນາດຫຼາຍໃນສານສູງສຸດ?________________________________

**24** ປະທານໃນສານສູງສຸດນັ້ນເປັນປະໂລຫິດໃຫຍ່ ພວກໂລມຖືສິດແຕ່ງຕັ້ງປະໂລຫິດໃຫຍ່ໄວ້ ແລະເຂົາເຄີຍສະເໜີຊື່ ຂອງຜູ່ທີ່ເຂົ້າຮ່ວມກັບເຂົາ. ດັ່ງນັ້ນປະໂລຫິດໃຫຍ່ຂຶ້ນກັບພວກໃດຢູ່ສະເໝີ? ____________________________________________

**25** ກ. ປະໂລຫິດໃຫຍ່ (ມະຫາປະໂລຫິດ) ທີ່ຕັດສິນລົງໂທດພະເຢຊູຊື່ຫຍັງ? (ມທ 26:57) __

ຂ. ເພິ່ນຂຶ້ນກັບພວກໃດ? ________________________________________

ຄ. ມີຕຳແໜ່ງໃດ ໃນສານສູງສຸດ? __________________________________

ຕອບ:

**20** *ຊາດູກາຍ*

**21** *ໂລມ*

**22** *ກ. ຟາລີຊາຍ* *ຂ. ຊາດູກາຍ*

**23** *ຊາດູກາຍ*

**24** *ຊາດູກາຍ*

**25** *ກ. ກາຍະຟາ* *ຂ. ຊາດູກາຍ* *ຄ. ປະໂລຫິດ*

**26** ພວກໂລມຊອກຫາປະໂລຫິດທີ່ຖືກໃຈເຂົາໄດ້ງ່າຍເພາະສະມາຊິກໃນພວກນັ້ນເປັນປະໂລຫິດສ່ວນຫຼາຍ. ສ່ວນຫຼາຍແມ່ນພວກໃດທີ່ເປັນປະໂລຫິດໃຫຍ່? ______________________

**27** ກ. ພວກຊາດູກາຍສ່ວນຫຼາຍມີໜ້າທີ່ໃດໃນສາດສະໜາ? ______________________

ຂ. ປະໂລຫິດໃຫຍ່ມີຕຳແໜ່ງໃດໃນສານສູງສຸດ? ______________________________

**28** ແມ່ນຈັກກະພັດໃດທີ່ແຕ່ງຕັ້ງປະໂລຫິດໃຫຍ່? _______________________________

**29** ແມ່ນພວກໃດມີສິດປົກຄອງໃນສານສູງສຸດ? _________________________________

**30** ແມ່ນສອງພວກໃດໃນສາດສະໜາຢິວທີ່ມາຮັບສິນບັບຕິສະມາຈາກໂຢຮັນບັບຕິສະໂຕ?

_____________________________ ແລະ _______________________________

**31** ທີ່ຄຣິສຕຽນແຍກເປັນພັກເປັນພວກ ຖືກກັບນ້ຳພະໄທຂອງພະເຈົ້າບໍ່? (I ກລທ 1:11-13) _

**32** ຕອນໃດທີ່ຄຣິສຕຽນແຍກເປັນພັກເປັນພວກກັນ ໝາຍຄວາມວ່າ ເຂົາບໍ່ເປັນຝ່າຍພະວິນຍານແຕ່ເປັນຝ່າຍໃດ? (I ກລທ 3:1) __________________________________________

**33** ໃນ I ກລທ 3:1 ເຂົາແຍກເປັນພັກເປັນພວກເພາະເຂົ້າໃຈໃນພະທຳຂອງພະເຈົ້າບໍ່ສົມບູນ. ອີກປະການໜຶ່ງເຂົາບໍ່ເໝືອນຜູ້ໃຫຍ່ ແຕ່ເໝືອນເດັກຢ່າງໃດໃນພະຄຣິດ? ____________

**34** ທັງພວກຟາລິຊາຍແລະພວກຊາດູກາຍທີ່ຖືພະຄຳພີບໍ່ຖືກ.

ກ. ແມ່ນພວກໃດເພີ້ມເຕີມພະຄຳພີ? _______________________________________

ຂ. ແມ່ນພວກໃດຕັດອອກບໍ່ຮັບບາງຕອນໃນພະຄຳພີ? __________________________

**35** ໃນພະບັນຍັດຄັ້ງທີສອງ 4:2 ມີຄຳເຕືອນຈຳເພາະເລື່ອງຄວາມຜິດຂອງຟາລິຊາຍ ແລະຊາດູກາຍດ້ວຍ.

ກ. ຢ່າ _________ ຖ້ອຍຄຳໃດໆ ທີ່ພະອົງສັ່ງ ຂ. ຢ່າ _______ ຖ້ອຍຄຳໃດໆ ທີ່ພະອົງສັ່ງ

ຕອບ:

**26** *ຊາດູກາຍ*

**27** *ກ. ປະໂລຫິດ* *ຂ. ປະທານ*

**28** *ໂລມ*

**29** *ຊາດູກາຍ*

**30** *ຟາລິຊາຍ ຊາດູກາຍ*

**31** *ບໍ່ຖືກ*

**32** *ຝ່າຍມະນຸດທຳມະດາ*

**33** *ເດັກອ່ອນ*

**34** *ກ. ຟາລິຊາຍ* *ຂ. ຊາດູກາຍ*

**35** *ກ. ເພີ້ມເຕີມ* *ຂ. ຕັດ*

**36** ກ. ພະນິມິດ 22:18 ເປັນຄຳເຕືອນຕໍ່ຝ່າຍໃດ? ________________________________

ຂ. ພະນິມິດ 22:19 ເປັນຄຳເຕືອນຕໍ່ຝ່າຍໃດ? ________________________________

**37** ເຊັ່ນດຽວກັນກັບຄຣິສຕຽນທີ່ເຄີຍແຍກເປັນພັກເປັນພວກ ອາດຈະຫຼົງຜິດຈາກພະຄຳພີໃນສອງດ້ານ. ຈະຫຼົງຜິດສອງດ້ານໃດ?

ກ. __________________________ ຂ. _________________________________

**38** ອ່ານ ເອເຟໂຊ 4:1-3 ໃນຕອນພະຄຳພີນີ້ອາຈານໂປໂລ ຍົກສະເຫນີວິທີແກ້ໄຂບັນຫາທີ່ຄຣິສຕຽນເຄີຍແຍກເປັນພັກ ເປັນພວກ. ໃນຂໍ້ 3 ແມ່ນໃຜຈະປະທານໃຫ້ເປັນອັນຫນຶ່ງອັນດຽວກັນ?

_________________________________________________________________

**39** ໃນຂໍ້ 2 ລັກສະນະຂອງຄົນທີ່ມີພະວິນຍານບໍລິສຸດຈະເປັນຢ່າງໃດ? ________________

_________________________________________________________________

**40** ຖ້າເຮົາມີລັກສະນະຢ່າງນັ້ນ ເປັນລັກສະນະທີ່ສະແດງອອກມາເປັນທ່າທີຊຶ່ງຄົນອື່ນຈະສັງເກດເຫັນບໍ່? _____________________________________________________________

| |
|---|
| ໃຫ້ທ່ານອ່ານ ເອເຟໂຊ 4:13-16 ແລ້ວຂໍການຊົງນຳຈາກພະເຈົ້າໃຫ້ພວກຄຣິສຕຽນເປັນຈິດຫນຶ່ງໃຈດຽວ ກັນໃນພະເຢຊູ ໃຫ້ເຮົາເວົ້າຄວາມຈິງໂດຍຄວາມຮັກໃຕ້ອຳນາດຂອງພະວິນຍານບໍລິສຸດ. |

**41** ເຮົາອາດຈະພົບວິທີແກ້ບັນຫາທີ່ຄຣິສຕຽນແຍກເປັນພັກເປັນພວກ ໃນເອເຟໂຊ ບົດໃດ? __

**42** ກັບໄປເບິ່ງຫນ້າປົກບົດນີ້ ແລ້ວໃຫ້ຊີ້ບອກແຕ່ລະພວກ.

ກ. __________________ ຂ. ___________________ ຄ. ___________________

*ຢ່າລືມຕອບບົດເສັງ!*

ຕອບ:

**36** *ກ. ຟາລີຊາຍ ຂ. ຊາດູກາຍ*

**37** *ກ. ການເພີ້ມເຕີມພະຄຳ ຂ. ການຕັດພະຄຳອອກ*

**38** *ພະວິນຍານບໍລິສຸດ*

**39** *ມີໃຈຖ່ອມລົງ ໃຈອ່ອນສຸພາບ ພຽນອົດທົນ ຜ່ອນຫນັກຜ່ອນເບົາເຊິ່ງກັນແລະກັນດ້ວຍຄວາມຮັກ*

**40** *ເຫັນ*

**41** *ບົດທີ 4*

**42** *ກ. ຟາລີຊາຍ ຂ. ຊາດູກາຍ ຄ. ໂຢຮັນບັບຕິສະໂຕ*